## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 19 ກັນຍາ 2021 (09-19-2021)

---

# ແນ່ໃຈໃນຄວາມຈິງ

*ເວລາໃດທ່ານເຊື່ອສິ່ງໃດສິ່ງນຶ່ງແຕ່ແລ້ວກັບບໍ່ຈິງ?*

**ຈຸດສຳຄັນໃນບົດຮຽນ**: ພົບຄວາມຈິງໃນພຣະເຢຊູຜູ້ດຽວ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເບິ່ງຄືວ່າວັທນາທັມກາຍມາມີຄວາມຊຳນານໜ້ອຍລົງໃນການບອກວ່າສິ່ງໃດຈິງຫຼືບໍ່ຈິງ. ໃນວັທນາທັມ 24/7 ຂໍ້ມູນທີ່ເຂົາປ້ອນແລະຄວາມຄິດທາງອອນໄລ໌ລ້ວນແຕ່ເສກສັນປັ້ນແຕ່ງຄືຂອງຈິງ, ມັນບໍ່ແມ່ນເຣື່ອງແປກທີ່ຊາວອາເມຣິກັນຫຼາຍຄົນຫຼົງເຊື່ອຄວາມຄິດທີ່ເປັນພຽງທິສດີແຜນຊົ່ວຮ້າຍເທົ່ານັ້ນ. ຄວາມຈິງ, ເຄິ່ງນຶ່ງຂອງຊາວອາເມຣິກັນຫຼົງເຊື່ອຢ່າງໜ້ອຍທິດສະດີແຜນຊົ່ວຮ້າຍຢ່າງນຶ່ງ! ຕົວຢ່າງ:

- 40 ເປີເຊັນ ເຊື່ອວ່າອົງການຢາ (FDA) ບໍ່ຢາກປິ່ນປົວໂຣກມະເຮັງໃຫ້ຫາຍຂາດ.
- 27 ເປີເຊັນ ເຊື່ອວ່າອາເມຣິກາຊຸກເຊື່ອງມະນຸດຕ່າງດາວໄວ້ໃນເຂດ 51 (ເຂດບ່ອນຄົນບໍ່ທ່ອງຜີບໍ່ຫຼອນ).
- 23 ເປີເຊັນ ເຊື່ອວ່າ ວັນທີ່ 9/11 (ພວກກໍ່ການຮ້າຍທຳລາຍນິວຢ໋ອກ) ແມ່ນສີມືຂອງຄົນພາຍໃນກະທຳ.
- 19 ເປີເຊັນ ເຊື່ອວ່າຣັຖບານໃຊ້ເຄມີຄວບຄຸມຈຳນວນປະຊາກອນຂອງປະເທດ.

ທິສດີແຜນຊົ່ວຮ້າຍຊະນິດນີ້, ເລີ່ມຈາກກຸ່ມຄົນທີ່ຮູ້ເທົ້າບໍ່ເຖິງການແລະຕໍ່ຈາກນັ້ນໄດ້ຮັບການອຸປຖັມຈາກແຫຼ່ງທີ່ເຊື່ອຖືໄດ້. ມັນເປັນການຍາກທີ່ຈະຮູ້ວ່າຈະເຊື່ອອັນໃດກັບຄວາມເຫັນທັງໝົດທີ່ມີຢູ່ຫັ້ນ. ພວກຄົນພາກັນສັບສົນຊຶ່ງ ສິ່ງຜົນໃຫ້ເກີດຄວາມສົງສັຍ. ມັນປາກບໍ່ໄດ້ໄອບໍ່ດັງວ່າການດົ້ນລົນຫາຄວາມຈິງມີຢູ່ຈິງ. ເຖິງຢ່າງໃດກໍຕາມ, ຍັງມີຂ່າວດີ! ຄວາມຈິງແທ້ຍັງມີຢູ່, ແລະ ພົບຄວາມຈິງໃນພຣະເຢຊູຄຣິດ.

**ພຣະຄັມພີກ່າວວ່າແນວໃດ** : (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**1. <u>1 ໂຢຮັນ 2:18-21</u>.**

*18ລູກທັງຫລາຍເອີຍ, ບັດນີ້ເປັນເວລາສຸດທ້າຍແລ້ວ ແລະ ຕາມທີ່ເຈົ້າທັງຫລາຍໄດ້ຍິນໄດ້ຟັງມາແລ້ວວ່າ ຜູ້ຕໍ່ສູ້ພຣະຄຣິດຈະ*
*ມີມາ ບັດນີ້ຜູ້ຕໍ່ສູ້ພຣະຄຣິດກໍເກີດມີມາຫລາຍແລ້ວ ສັນນັ້ນພວກເຮົາຈຶ່ງຮູ້ວ່າເປັນເວລາສຸດທ້າຍ.*
*19ເຂົາເຫລົ່ານັ້ນໄດ້ອອກໄປ*
*ຈາກພວກເຮົາ ແຕ່ເຂົາບໍ່ແມ່ນຝ່າຍພວກເຮົາ ເພາະວ່າຖ້າເຂົາແມ່ນຝ່າຍພວກເຮົາ ເຂົາກໍຈະໄດ້ຕັ້ງຢູ່ກັບພວກເຮົາຕໍ່ໄປ (ແຕ່*
*ເຂົາໄດ້ອອກໄປແລ້ວ) ເພື່ອປະກົດແຈ້ງວ່າເຂົາເຫລົ່ານັ້ນບໍ່ແມ່ນຝ່າຍພວກເຮົາຈັກຄົນ.*
*20ແຕ່ຝ່າຍເຈົ້າໄດ້ຮັບການຊົງຫົດສົງ*
*ຈາກພຣະອົງຜູ້ບໍລິສຸດແລ້ວ ພວກເຈົ້າທຸກຄົນກໍມີຄວາມຮູ້.✝*
*21ເຮົາໄດ້ຂຽນຈົດໝາຍມາເຖິງເຈົ້າທັງຫລາຍບໍ່ແມ່ນເພາະພວກ*
*ເຈົ້າບໍ່ຮູ້ຄວາມຈິງ ແຕ່ເພາະເຈົ້າທັງຫລາຍຮູ້ແລ້ວ ແລະ ເພາະວ່າຄຳຕົວະບໍ່ໄດ້ມາຈາກຄວາມຈິງ.*

ຕັ້ງແຕ່ການສເດັດມາຂອງພຣະເຢຊູ, ຜູ້ເຊື່ອໄດ້ຮູ້ວ່າພວກເຂົາດຳເນີນຊີວິດຢູ່ໃນ "ຍຸກສຸດທ້າຍ." ຖ້ອຍຄຳທີ່ວ່າ "ວັນສຸດທ້າຍ" ຈະພົບໄດ້ພຽງແຕ່ທີ່ນີ້ໃນພຣະຄັມພີໃໝ່ແລະຄ້າຍຄືກັບຄວາມເຫັນວັນສຸດທ້າຍ. ຖ້ອຍຄຳນີ້ຊີ້ໄປຫາການສະເດັດກັບມາຂອງພຣະຄຣິດແລະການພິພາກສາຄັ້ງສຸດທ້າຍ. ສຳລັບຜູ້ເຊື່ອແລ້ວ, ນີ້ແມ່ນມື້ທີ່ຄາດຫວັງວ່າຈະເຕັມໄປດ້ວຍຄວາມຊົມຊື່ນ

ຍິນດີ. ເຖິງຢ່າງໃດກໍຕາມ, ສຳລັບຜູ້ບໍ່ເຊື່ອ, ວັນນີ້ຈະເປັນວັນພິພາກສາ. ຫົວໃຈທຸກດວງຈະຖືກນຳມາແບຢູ່ຕໍ່ໜ້າອົງພຣະຜູ້ເປັນເຈົ້າ. ທຸກຄົນທີ່ໄດ້ວາງໃຈໃນພຣະຄຣິດແລະອົດທົນໃນຄວາມຊອບທັມຈະໄດ້ຮັບຊີວິດອັນຕລອດໄປເປັນນິດ. ແຕ່ ຜູ້ທີ່ຢືນຍັດຢູ່ໃນຄວາມບໍ່ເຊື່ອ ແລະປະພຶດໃນທາງບໍ່ຊອບທັມຈະໄດ້ຮັບຄວາມຕາຍອັນຕລອດໄປເປັນນິດ.

ທ່ານໂຢຮັນໄດ້ເນັ້ນຄວາມຈິງຂອງວັນສຸດທ້າຍດ້ວຍການບອກເຮົາວ່າ, "ການຕໍ່ສູ້ພຣະຄຣິດຈະມີມາ." ທ່ານໂປໂລບັນລະຍາຍພາບພົດຖຽວກັນດັ່ງນີ້, "ຄົນອະທັມ" ແລະ "ຜູ້ຖືກໝາຍໄວ້ສຳລັບຄວາມຈິບຫາຍ" (2 ທສນ 2:3-4). ໃນອານາຄົດ, ຄົນຜູ້ນີ້ຈະຕັ້ງຕົວເປັນຜູ້ຕໍ່ຕ້ານພຣະເຈົ້າ. ໃນຣະຫວ່າງນັ້ນ, "ຜູ້ຕໍ່ສູ້ພຣະຄຣິດຫຼາຍຄົນໄດ້ມາ." ໃນວັນສຸດທ້າຍນີ້ຈະເປັນສູນລວມຕໍ່ຕ້ານພຣະຄຣິດ, ຜູ້ຕໍ່ສູ້ພຣະຄຣິດກໍຈະປາກົດຂຶ້ນ, ຜູ້ຊຶ່ງແມ້ກະທັ້ງດຽວນີ້ກໍກຳລັງທຳການຕໍ່ຕ້ານກັບອານາຈັກຂອງພຣະເຈົ້າຢູ່. ຄົນເຫຼົ່ານີ້ແມ່ນບຸກຄົນທີ່ຕໍ່ຕ້ານຄຳສອນຂອງຂໍ້ພຣະຄັມພີຢ່າງແຈ່ມແຈ້ງ, ຕົ້ນຕໍແມ່ນຕ້ານຫຼັກທັມຂອງພຣະຄຣິດ. ທ່ານໂຢຮັນໄດ້ເຕືອນພວກເຮົາເຖິງການປາກົດຕົວຂອງພວກເຂົາເພື່ອເຮົາຈະບໍ່ຖືກພວກເຂົາຈັບໄດ້. ການປາກົດຕົວຂອງຄຣູສອນປອມເຫຼົ່ານີ້ແມ່ນໝາຍສຳຄັນຂອງຍຸກສຸດທ້າຍ.

*ວັທນາທັມເຮົາສະທ້ອນພາບພົດຂອງຜູ້ຕໍ່ສູ້ຄຣິສຕຽນຢ່າງໃດ?*

ພວກເຮົາຈຳແນກຄຣູສອນປອມນີ້ຢ່າງໃດ? ພວກເຮົາຮູ້ຈັກເຂົາດ້ວຍການຍອມມອບຕົວຂອງເຂົາໃຫ້ຄວາມບໍ່ຈິງແລະເຂົາໄດ້ອອກໂບດໄປ. ໃນຍຸກສມັຍຂອງທ່ານໂຢຮັນ, ຄົນຫຼອກລວງເຫຼົ່ານີ້ສະແດງຫຼັກຖານຕົວຈິງຂອງເຂົາໂດຍການອອກຈາກໂບດໄປ. ພວກຄຣູສອນປອມເຫຼົ່ານີ້ບໍ່ມີຫັງຍິ່ງກວ່າໝາປ່າສວມເຄື່ອງນຸ່ງເປັນແກະ. ຍ້ອນເຂົາຍືນຍົງຢູ່ໃນຄວາມບໍ່ຊອບທັມ, ມັນຈຶ່ງໄດ້ກາຍເປັນຫຼັກຖານວ່າພວກເຂົາບໍ່ເຄີຍເປັນພາກສ່ວນຂອງຄຣິສຕະຈັກຈັກເທື່ອ.

ພວກເຮົາພົບຢ່າງດຽວກັນວັນນີ້. ຄຣູສອນປອມເກືອບທຸກຄົນອອກໂບດໄປກໍເພື່ອກໍ່ຕັ້ງໂບດຂອງຕົນເອງ. ອີງຕາມຄຳຕົວະເຫຼົ່ານີ້ເຂົາເຫັນຄົນອື່ນເປັນຜູ້ຜິດໝົດ ມີແຕ່ເຂົາຜູ້ດຽວເທົ່ານັ້ນທີ່ຖືກ. ຂອບຄຸນພຣະເຈົ້າ ຜູ້ເຊື່ອແທ້ຈິງ "ໄດ້ຮັບການຫົດສົງຈາກອົງບໍຣິສຸດແລ້ວແລະ..ຮູ້ຈັກຄວາມຈິງ." ການຫົດສົງນີ້ແມ່ນການສະຖິດຢູ່ຂອງພຣະວິນຍານບໍຣິສຸດ, ທີ່ຜູ້ເຊື່ອທຸກຄົນໄດ້ຮັບໃນຂນະທີ່ເຂົາກັບໃຈໃໝ່. ພຣະວິນຍານບໍຣິສຸດເປັນຄຣູສອນສູງສຸດ, ນຳພາເຮົາສູ່ຄວາມຈິງທັງໝົດ (ໂຢຮັນ 16:3); ເຫດສັນນັ້ນ, ພຣະອົງເປັນຜູ້ສອນແລະນຳພາເຮົາຂນະທີ່ເຮົາສຶກສາພຣະຄັມພີ. ເມື່ອໃດ ເຮົາເພິ່ງພຣະວິນຍານຂອງພຣະເຈົ້າ, ພວກເຮົາກໍໄດ້ຮັບການປົກປ້ອງຈາກການຜິດພາດທັງປວງ.

**2. 1 ໂຢຮັນ 2:22-26.**

*22 ແມ່ນໃຜເປັນຜູ້ເວົ້າຕົວະ ຄັນບໍ່ແມ່ນຜູ້ນັ້ນທີ່ປະຕິເສດວ່າພຣະເຢຊູບໍ່ແມ່ນພຣະຄຣິດ ຜູ້ທີ່ປະຕິເສດພຣະບິດາກັບພຣະບຸດ*
*ຜູ້ນັ້ນແຫລະ, ເປັນຜູ້ຕໍ່ສູ້ພຣະຄຣິດ. 23 ຜູ້ໃດທີ່ປະຕິເສດພຣະບຸດ ຜູ້ນັ້ນກໍບໍ່ມີພຣະບິດາ ຜູ້ໃດທີ່ຮັບຮູ້ພຣະບຸດ ຜູ້ນັ້ນກໍມີພຣະບິ*
*ດາເໝືອນກັນ. 24 ຝ່າຍເຈົ້າທັງຫລາຍ, ຈົ່ງໃຫ້ຂໍ້ຄວາມທີ່ພວກເຈົ້າໄດ້ຍິນຕັ້ງແຕ່ຕົ້ນມານັ້ນຕັ້ງຢູ່ກັບພວກເຈົ້າ ຖ້າຂໍ້ຄວາມທີ່ເຈົ້າ*
*ທັງຫລາຍໄດ້ຍິນແຕ່ຕົ້ນມານັ້ນຫາກຕັ້ງຢູ່ກັບພວກເຈົ້າ ພວກເຈົ້າກໍຕັ້ງໝັ້ນຄົງຢູ່ໃນພຣະບຸດແລະໃນພຣະບິດາເໝືອນກັນ. 25 ນີ້*
*ແຫລະ, ເປັນພຣະສັນຍາທີ່ພຣະອົງໄດ້ຊົງສັນຍາໄວ້ແກ່ເຮົາທັງຫລາຍຄືຊີວິດອັນຕະຫລອດໄປເປັນນິດ. 26 ຂໍ້ຄວາມເຫລົ່ານີ້*
*ເຮົາໄດ້ຂຽນມາເຖິງເຈົ້າທັງຫລາຍ ກ່ຽວເຖິງເລື່ອງຄົນເຫລົ່ານັ້ນທີ່ຢາກໃຫ້ພວກເຈົ້າຫລົງໄປ.*

ທ່ານໂຢຮັນກໍໄດ້ປະກາດເໝືອນກັນວ່າຜູ້ຕໍ່ຕ້ານຄຣິສຕຽນເປັນຜູ້ "ຕົວະ." ຄວາມຈິງເຂົາເປັນຜູ້ຕໍ່ສູ້-ຕໍ່ຕ້ານ-ພຣະຄຣິດໝາຍຄວາມວ່າເຂົາໄດ້ປະຕິເສດຄວາມຈິງຜູ້ທີ່ພຣະເຢຊູຊົງເປັນ. ຜູ້ຕໍ່ສູ້ພຣະຄຣິດຕົວະເພາະມັນປະຕິເສດວ່າພຣະເຢຊູແມ່ນພຣະຄຣິດ. ແລະໃຜກໍຕາມ ທີ່ປະຕິເສດຄວາມສັກສິດຂອງພຣະເຢຊູ-ວ່າພຣະອົງແມ່ນພຣະຄຣິດ, ຜູ້ ທີ່ໄດ້ຮັບການຫົດສົງຈາກພຣະເຈົ້າ-ໃນທີ່ສຸດກໍໄດ້ປະຕິເສດພຣະບິດາເໝືອນກັນ. ບຸກຄົນໃດນຶ່ງບໍ່ສາມາດເຊື່ອຕາມສິ່ງທີ່ລາວຕ້ອງການກ່ຽວກັບ

ພຣະບຸດຂອງພຣະເຈົ້າ, ພຣະເຢຊູ, ແລະຄິດວ່າລາວສາມາດມີຄວາມສໍາພັນກັບພຣະບິດາ. ການເຊື່ອທີ່ຜິດກ່ຽວກັບພຣະເຢຊູແມ່ນການເຊື່ອຜິດກ່ຽວກັບພຣະບິດາ. ເຫດໃດ? ເພາະວ່າພຣະເຢຊູເປັນພຣະເຈົ້າ. ແທ້ຈິງ, ພຣະອົງເປັນພຣະເຈົ້າສະເດັດມາໃນຮ່າງມະນຸດ.

ຄຣູສອນປອມໃນສະໄໝຂອງທ່ານໂຢຮັນໄດ້ປະຕິເສດຄວາມຈິງຢ່າງເປີດເຜີຍກ່ຽວກັບສະຖານະຜູ້ທີ່ພຣະເຢຊູຊົງເປັນ. ຄໍາສອນປອມທີ່ຖືກນໍາມາສອນເອີ້ນວ່າລັດທິນອກຣີດ (Gnosticism). ສາສນານອກຣີດມີຄໍາສອນຜິດຕົ້ນຕໍຢູ່ສອງປະການຄື:

- **ລັດທິໂດເຊຕິສ (Docetism).** ພວກລັດທິນອກຣີດເຊື່ອວ່າຮ່າງກາຍຊົ່ວຮ້າຍ. ສະນັ້ນພຣະເຈົ້າເປັນວິນຍານ, ບໍ່ສາມາດສວມເນື້ອກາຍ. ດັ່ງນັ້ນ ອີງຕາມເຂົາ, ພຣະເຢຊູບໍ່ໄດ້ມາໃນເນື້ອກາຍ, ມັນປາກົດພຽງແຕ່ພຣະອົງໄດ້ເຮັດໃຫ້ເກີດ. ນີ້ແມ່ນການປະຕິເສດຢ່າງຊັດເຈນຂອງການຊົງບັງເກີດ: ພຣະເຈົ້າຊົງບັງເກີດເປັນມະນຸດ.
- **ລັດທິເຊຣິນທຽນນິສ (Cerinthianism).** ພວກເຊຣິນທັສສອນວ່າພຣະເຢຊູມີກາຍມະນຸດແທ້ຈິງ, ແຕ່ ພຣະອົງຍັງບໍ່ທັນໄດ້ເປັນພຣະຄຣິດຈົນກວ່າພຣະວິນຍານມາປະທັບເທິງພຣະອົງໃນພິທີບັບຕິສມາ. ພວກເຊຣິນທັສສອນວ່າພຣະວິນຍານສະຖິດຢູ່ເທິງພຣະເຢຊູຕລອດການຮັບໃຊ້ສາທາຣະນະ, ແຕ່ ພຣະວິນຍານອອກຈາກພຣະອົງກ່ອນການຕຶງ, ໃນເມື່ອພຣະວິນຍານບໍ່ສາມາດຖືກຂ້າດ້ວຍການທໍຣະມານ.

ແນ່ນອນ, ພຣະຄັມພີສອນວ່າພຣະເຢຊູເປັນພຣະເຈົ້າເຕັມຕົວ ຜູ້ທີ່ໄດ້ສະເດັດມາໃນຮ່າງກາຍຂອງມະນຸດ (ໂຢຮັນ 1:1-5, 14). ປະຕິເສດຢ່າງໃດຢ່າງນຶ່ງກໍເປັນການຕໍ່ຕ້ານພຣະເຈົ້າ. ພຣະເຢຊູຊົງເປັນພຣະເຈົ້າຕລອດໄປເປັນນິດຜູ້ຊຶ່ງໄດ້ສະເດັດຈາກສວັນສູ່ກາລເວລາ. ເກີດຈາກຍິງພົມຈາຣີ, ສວມສະພາບຮ່າງກາຍມະນຸດ, ຜູ້ໄດ້ສິ້ນພຣະຊົນບົນໄມ້ກາງແຂນ, ແລະຕໍ່ມາໄດ້ຟື້ນຂຶ້ນມາຈາກຕາຍ.

ສິ່ງທີ່ຜູ້ເຊື່ອໄດ້ຍິນຕັ້ງແຕ່ຕົ້ນມາ, ຊຶ່ງ, ແມ່ນການສິດສອນຈາກພຣະທັມພຣະກິດຕິຄຸນ. ເຂົາຕ້ອງປ່ອຍໃຫ້ຄວາມຈິງຂອງພຣະທັມພຣະກິດຕິຄຸນສະຖິດຢູ່ໃນເຂົາ. ເຂົາຕ້ອງຍຶດຖືມັນແລະບໍ່ໜີຈາກມັນ. ຫົວໃຈຂອງຂ່າວປະເສີດແມ່ນທຸກຄົນທີ່ຮູ້ຈັກພຣະບິດາໂດຍທາງພາຣະກິດການຊ່ອຍໃຫ້ພົ້ນຂອງພຣະບຸດມີພຣະສັນຍາກ່ຽວກັບຊີວິດອັນຕລອດໄປເປັນນິດ. ມີຫຼາຍຄົນຫວັງຊີວິດອັນຕລອດໄປເປັນນິດ, ແຕ່ຊີວິດອັນຕລອດໄປເປັນນິດແມ່ນພຣະສັນຍາທີ່ແນ່ນອນສໍາລັບຜູ້ເຊື່ອໃນພຣະເຢຊູຄຣິດທຸກຄົນເພາະຄວາມຈິງພົບໄດ້ໃນພຣະເຢຊູອົງດຽວ.

*ມີຄວາມຈິງຫຍັງກ່ຽວກັບພຣະເຢຊູທີ່ເຂົ້າໃຈຫຼືເຊື່ອຍາກ?*

### 3. 1 ໂຢຮັນ 2:27-29.

*27 ແຕ່ຝ່າຍເຈົ້າທັງຫລາຍ, ການຊົງທັດສົງທີ່ພວກເຈົ້າໄດ້ຮັບຈາກພຣະອົງນັ້ນ ກໍຍັງຕັ້ງຢູ່ກັບພວກເຈົ້າ ແລະພວກເຈົ້າບໍ່ຕ້ອງການໃຫ້ຜູ້ໃດອີກສອນ ເພາະການຊົງທັດສົງຂອງພຣະອົງກໍາລັງສັ່ງສອນພວກເຈົ້າເຖິງທຸກສິ່ງແລະເປັນຄວາມຈິງ ບໍ່ແມ່ນຄວາມຕົວະ ການຊົງທັດສົງໄດ້ສອນເຈົ້າທັງຫລາຍຢ່າງໃດ ພວກເຈົ້າຈົ່ງຕັ້ງໝັ້ນຄົງຢູ່ໃນພຣະອົງຢ່າງນັ້ນ. 28 ແລະບັດນີ້ ລູກນ້ອຍທັງຫລາຍເອີຍ, ຈົ່ງຕັ້ງໝັ້ນຄົງຢູ່ໃນພຣະອົງ ເພື່ອວ່າ, ເມື່ອພຣະອົງຊົງປະກົດ ເຮົາທັງຫຼາຍຈະໄດ້ມີໃຈກ້າ ແລະບໍ່ຫຼົບໜ້າຈາກພຣະອົງດ້ວຍຄວາມລະອາຍ ເມື່ອພຣະອົງສະເດັດມາ. 29 ຖ້າເຈົ້າຮູ້ວ່າພຣະອົງຜູ້ຊົງທ່ຽງທໍາ ພວກເຈົ້າກໍຮູ້ໄດ້ວ່າ. ທຸກຄົນທີ່ປະຕິບັດຕາມຄວາມທ່ຽງທໍານັ້ນກໍບັງເກີດມາຈາກພຣະອົງເໝືອນກັນ.*

ຫຼັກຖານຂອງຄວາມພົ້ນຈິງບໍ່ແມ່ນພຽງແຕ່ເຊື່ອສິ່ງທີ່ຖືກຕ້ອງ. ການຢືນຢັດຕໍ່ຫຼັກຄວາມເຊື່ອນັ້ນຍັງບໍ່ພຽງພໍ. ຄວາມເຊື່ອຂອງເຮົາຕ້ອງແປວ່າດໍາເນີນຊີວິດທີ່ຖືກຕ້ອງ. ພວກເຮົາຕ້ອງສແວງຫາຄວາມຊອບທັມໃນແສງສວ່າງຂອງການສະເດັດກັບມາຂອງພຣະຄຣິດ. ທ່ານໂຢຮັນກ່າວເຖິງການສະເດັດກັບມາຂອງພຣະຄຣິດເພື່ອກະຕຸ້ນຜູ້ອ່ານໃຫ້ດໍາເນີນຊີວິດໃນທາງຊອບທັມ. ທັສນະຄະຕິຂອງເຮົາຕໍ່ການສະເດັດມາຄັ້ງທີ່ສອງຂອງພຣະຄຣິດກ່າວຢ່າງຫຼວງຫຼາຍກ່ຽວກັບສະພາບຝ່າຍວິນຍານຂອງເຮົາ.

*พระวิบยาบบํริสุดຊ່ວຍເຮົາເຂົ້າໃຈຄວາມຈິງໄດ້ແນວໃດ?*

ທ່ານໂຢຮັນຊຸກຍູ້ຜູ້ອ່ານໃຫ້ "ຕັ້ງໝັ້ນຢູ່ໃນພຣະອົງ." ພວກເຮົາຈະບໍ່ຖືກຍົກຍ້າຍອອກຈາກຄວາມຫວັງຂອງພຣະກິດຕິຄຸນ. ພວກເຮົາຕ້ອງຍຶດໝັ້ນຢູ່ໃນພຣະຄຣິສຕະທັມຄັມພີ, ໃນຂນະທີ່ເຮົາດໍາເນີນຊີວິດເພື່ອພຣະກຽດຂອງພຣະເຈົ້າ. ທ່ານໂຢຮັນໄດ້ກ່າວເຖິງຜົນກໍາໄຣສອງຢ່າງຂອງການຕັ້ງໝັ້ນຢູ່ໃນພຣະຄຣິດດັ່ງນີ້:

- **ຄວາມໝັ້ນໃຈ.** ອັນນີ້ສາມາດແປໄດ້ວ່າໃຈກ້າ. ພຣະເຈົ້າປະສົງໃຫ້ທຸກຄົນຕຽມພ້ອມເຂົ້າພົບພຣະອົງແລະມີຄວາມໝັ້ນໃຈອັນແຂງແກ່ນໃນການສເດັດກັບມາຂອງພຣະອົງ.
- **ບໍ່ລະອາຍ.** ໜ້າເສົ້າໃຈ, ມີຫຼາຍຄົນບໍ່ມີຄວາມໝັ້ນໃຈ; ແທນທີ່ຈະໝັ້ນໃຈ ເຂົາກັບແບກຫາບຄວາມຜິດແລະຄວາມລະອາຍ. ເຖິງຢ່າງໃດກໍຕາມ, ພຣະເຈົ້າປະສົງໃຫ້ໄພ່ພົນຂອງພຣະອົງຕັ້ງໝັ້ນຢູ່ໃນພຣະອົງແລະສະນັ້ນຈຶ່ງບໍ່ມີເຫດຜົນທີ່ຕ້ອງອາຍເວລາພຣະເຢຊູສະເດັດກັບມາ.

ດ້ວຍວ່າ ມີຫຼາຍຄົນບໍ່ເຫັນການສເດັດກັບມາຂອງພຣະຄຣິດທີ່ຂອບຟ້າ, ພວກເຂົາຈຶ່ງບໍ່ເຫັນຄວາມຈໍາເປັນຕ້ອງປ່ຽນວິຖີການດໍາເນີນຊີວິດຫຼືດໍາເນີນຊີວິດທີ່ບໍ່ມີເຣື່ອງການກັບມາຂອງພຣະອົງຢູ່ໃນຫົວ. ແຕ່, ສໍາລັບຄຣິສຕຽນ, ທີ່ເຊື່ອຖືກຕ້ອງ ຕ້ອງໄດ້ຮັບການສນັບສນູນດ້ວຍຫຼັກທັມອັນຖືກຕ້ອງອີກດ້ວຍ. ເຮົາເບິ່ງທີ່ພຣະຄຣິດແລະຕອບສນອງຕໍ່ການເກີດໃໝ່ທີ່ພຣະອົງປະທານໃຫ້, ພວກເຮົາສແວງຫາການດໍາເນີນຊີວິດທີ່ຖືກຕ້ອງໃນຣິດອໍານາດຂອງພຣະອົງ. *ຖ້າເຈົ້າຮູ້ວ່າພຣະອົງຊອບທັມ ພວກເຈົ້າກໍຮູ້ໄດ້ວ່າ*✝ *ທຸກຄົນທີ່ປະຕິບັດຕາມຄວາມທ່ຽງທັມນັ້ນກໍບັງເກີດມາຈາກພຣະອົງເໝືອນກັນ (ຂໍ້ 29).* ການປະຕິບັດຄວາມຊອບທັມໄດ້ເປັນຫຼັກຖານຂອງຄວາມລອດພົ້ນແທ້. ພວກເຮົາສາມາດແນ່ໃຈໃນຄວາມພົ້ນຂອງເຮົາ, ແລະ ພວກເຮົາສາມາດແນ່ໃຈໃນຄວາມຈິງຈະພົບໄດ້ໂດຍທາງຄວາມສັມພັນກັບພຣະເຢຊູ.

## ນໍາໃຊ້ໃນຊີວິດ

ເຮົາສາມາດພົບຄວາມຈິງໃນພຣະເຢຊູຜູ້ດຽວ? ຈົ່ງເລືອກການນໍາໃຊ້ຂໍ້ໃດຂໍ້ນຶ່ງຕໍ່ໄປນີ້:

- **ກວດເບິ່ງຊີວິດຂອງທ່ານ.** ທ່ານໄດ້ໂອບກອດເອົາຄວາມຈິງແທ້ໂດຍການວາງໃຈໃນພຣະເຢຊູເປັນອົງພຣະຜູ້ເປັນເຈົ້າແລະພຣະຜູ້ຊ່ອຍໃຫ້ ພົ້ນຂອງທ່ານບໍ່? ຈົ່ງເບິ່ງຊີວິດທ່ານ, ມັນຈະບອກທຸກສິ່ງທີ່ທ່ານຕ້ອງການຢາກຮູ້. ຖ້າທ່ານບໍ່ແນ່ໃຈໃນຄວາມສັມພັນກັບພຣະເຈົ້າ, ມີການຊ່ອຍຢູ່ຂ້າງໃນໜ້າປົກຂອງປຶ້ມຫົວນີ້.
- **ຈັດລໍາດັບຊີວິດຂອງທ່ານ.** ໃນແສງສວ່າງຂອງການສະເດັດກັບມາຂອງພຣະຄຣິດ, ການລຽງລໍາດັບຊີວິດຂອງທ່ານຢູ່ໃນລໍາດັບທີ່ຖືກຕ້ອງບໍ່? ຖ້າບໍ່,ຈະຕ້ອງປ່ຽນແປງອັນໃດເພື່ອຈັດລໍາດັບມັນ. ໃນອາທິດນີ້ຈົ່ງສໍາຫຼວດຢ່າງລະອຽດລໍາດັບຄວາມສໍາຄັນຂອງທ່ານແລະຈົ່ງສັດຊື່ຕໍ່ຕົວເອງ. ທູນຂໍພຣະເຈົ້າຊ່ວຍທ່ານໃນລໍາດັບສິ່ງເຫຼົ່ານີ້.
- **ຈົ່ງລົງທຶນໃນຊີວິດຜູ້ໃດຜູ້ນຶ່ງ.** ທ່ານຮູ້ຈັກຜູ້ໃດຜູ້ນຶ່ງທີ່ຢາກໄດ້ຍິນຄວາມຈິງບໍ່? ອາດເປັນເພື່ອນບ້ານ,ເພື່ອນຮ່ວມງານ, ເພື່ອຮ່ວມຫ້ອງຮຽນ, ຫຼືເພື່ອນຜູ້ໃດຜູ້ນຶ່ງບໍ່? ຖ້າມີ, ຈົ່ງເລົ່າຄວາມຈິງຂອງຂ່າວປະເສີດພຣະກິດຕິຄຸນໃຫ້ເຂົາຟັງໃນອາທິດນີ້. ຈົ່ງຍ່າງໄປອີກກ້າວນຶ່ງແລະຊື້ປຶ້ມພຣະຄັມພີຫົວນຶ່ງໃຫ້ເຂົາ, ຖ້າທ່ານເຊື່ອວ່າເຂົາບໍ່ມີ.

ມີຫຼາຍວິທີທາງທີ່ຈະຫຼອກລວງເຮົາທຸກມື້ນີ້. ແຕ່ຄວາມຈິງຂອງພຣະທັມພຣະເຈົ້າຈະນໍາເຮົາໄປສູ່ຜູ້ຊຶ່ງເປັນທາງນັ້ນ, ເປັນຄວາມຈິງ ແລະ ເປັນຊີວິດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ http://.lsbf.us ໂດຍ PSI**